University of Basel

# Gender and Labour in the Global South

## Article – Laotian

This translation is for a better understanding of the English texts. We are very happy if you join the discussions. Please note that all contributions in the comment section and in the discussion steps need to be in English.

**The labour market: a gendered domain**

ຫົວຂໍ້: ຕະຫຼາດແຮງງານ: ດ້ານບົດບາດທາງເພດ.

**Short description:**
ທ່ານ Yamila Pita ໄດ້ອະທິບາຍແນວຄວາມຄິດ ກ່ຽວກັບຕະຫຼາດແຮງງານລະຫວ່າງຍິງ-ຊາຍ ບົນພື້ນຖານຂອງວຽກງານການຜະລິດ ແລະ ວຽກງານຜະລິດໝູນວຽກ.

**Content:**

ເພື່ອຢືນຢັນວ່າ ຕະຫຼາດແຮງງານແມ່ນການຍັ້ງຢືນບົດບາດຍິງ-ຊາຍ ຕ້ອງໄດ້ຮັບຮູ້ວ່າ ຕະຫຼາດແຮງງານນີ້ໄດ້ສ້າງຂື້ນໂດຍບົດບາດຍິງ-ຊາຍ, ມາດຕະຖານ ແລະ ການພົວພັນທີ່ມີຢູ່ໃນສັງຄົມ. ນອກຈາກນັ້ນ, ການອະທິບາຍ ກ່ຽວກັບຕະຫຼາດແຮງງານທາງເພດ ຫມາຍເຖິງການເຂົ້າໃຈງ່າຍໆ ກໍ່ຄືຕະຫຼາດແຮງງານທີ່ເປັນກາງໂດຍມີປັດໃຈ ແລະ ເງື່ອນໄຂທາງເພດແແບບອິດສະຫຼະ. ເພື່ອວິເຄາະຕະຫຼາດແຮງງານຈາກທັດສະນະບົດບາດຍິງ-ຊາຍ, ກ່ອນອື່ນໝົດ ພວກເຮົາຕ້ອງສ້າງຄວາມຄຸ້ນເຄີຍກັບແນວຄວາມຄິດ ຂອງການແບ່ງປັນແຮງງານ ແລະ ແນວຄິດດ້ານການຜະລິດ ແລະ ວຽກງານຜະລິດໝູນວຽກ ດ້ວຍຕົວມັນເອງ.

ການແບ່ງແຮງງານລະຫວ່າງຍິງ-ຊາຍ ປະກອບດ້ວຍການມອບໝາຍໜ້າວຽກ ແລະ ກິດຈະກໍາຕ່າງໆໃຫ້ຜູ້ຊາຍ ແລະ ແມ່ຍິງ, ເຊິ່ງຕອບສະໜອງຕໍ່ບົດບາດດ້ານສັງຄົມທີ່ໄດ້ຮັບມອບໝາຍຕາມເພດ/ບົດບາດຍິງ-ຊາຍ. ດັ່ງນັ້ນ, ແມ່ຍິງໄດ້ຖືກມອບຫມາຍໃຫ້ປະຕິບັດກິດຈະກໍາພາຍໃນຄົວເຮືອນ ຫຼື ສ່ວນຕົວ - ເອີ້ນວ່າ ວຽກງານການຜະລິດໝູນວຽນ - ໃນຂະນະທີ່ຜູ້ຊາຍຖືກມອບຫມາຍໃຫ້ປະຕິບັດກິດຈະກໍາໃນຂອບເຂດສາທາລະນະ - ເອີ້ນວ່າວຽກງານການຜະລິດ.

ໃນທາງກົງກັນຂ້າມ, ວຽກງານທີ່ກ່ຽວຂ້ອງກັບກິດຈະກໍາການດູແລ (ເຊັ່ນ: ການດູແລເດັກນ້ອຍ, ຄົນເຈັບ ຫຼື ຜູ້ສູງອາຍຸ) ແລະ ວຽກງານທີ່ກ່ຽວຂ້ອງກັບການຈັດຕັ້ງ ແລະ ການບໍາລຸງຮັກສາຄົວເຮືອນ (ເຊັ່ນ: ການໄປຊື້ເຄື່ອງ, ການປຸງແຕ່ງອາຫານ ຫຼື ທໍາຄວາມສະອາດ) ແມ່ນຫມາຍເຖິງວຽກງານການຜະລິດໝູນວຽນ. ດັ່ງນັ້ນ, ວຽກງານການຜະລິດໝູນວຽນ ແມ່ນມີຈຸດປະສົງໃນການຕອບສະໜອງຄວາມຕ້ອງການ ຂອງຄົວເຮືອນ ແລະ ຍັງບໍ່ໄດ້ຮັບຄ່າຈ້າງ ເມື່ອປະຕິບັດຢູ່ໃນເຮືອນ. ໃນຄວາມໝາຍນີ້, ວຽກງານການຜະລິດໝູນວຽນບໍ່ພຽງແຕ່ແມ່ນການປະກອບສ່ວນພື້ນຖານ ເພື່ອຄວາມຜາສຸກ ຂອງຄອບຄົວ ແລະ ສັງຄົມໂດຍທົ່ວໄປເທົ່ານັ້ນ, ຍັງແມ່ນເງື່ອນໄຂ ເພື່ອຄວາມເປັນໄປໄດ້ ຂອງວຽກ

ງານທີ່ມີປະສິດທິຜົນ. ຢ່າງໃດກໍ່ຕາມ, ວຽກງານການຜະລິດໝູນວຽນ ຍັງເປັນວຽກງານທີ່ເບິ່ງບໍ່ເຫັນເປັນສ່ວນໃຫຍ່ທີ່ຂາດຄຸນຄ່າທາງດ້ານເສດຖະກິດ ແລະ ສັງຄົມ.

ຄຽງຄູ່ກັນນັ້ນ, ວຽກງານຕິດພັນກັບຊີວິດການເປັນຢູ່ດ້ານເສດຖະກິດ, ການເມືອງ ແລະ ສັງຄົມ ແມ່ນວຽກງານທີ່ມີປະສິດທິຜົນ. ກິດຈະກຳເຫຼົ່ານີ້ ແມ່ນໄດ້ຮັບການປະຕິບັດໃນຂົງເຂດສາທາລະນະ, ເປັນພື້ນຖານທີ່ສັງເກດທາງປະຫວັດສາດໄດ້ມອບຫມາຍໃຫ້ຜູ້ຊາຍ. ເນື່ອງຈາກວ່າ ວຽກງານເຫຼົ່ານີ້ ແມ່ນແນໃສ່ການຜະລິດສິນຄ້າ ແລະ ການບໍລິການ, ເຂົາເຈົ້າມີມູນຄ່າແລກປ່ຽນ ແລະ ມີຄ່າຕອບແທນທາງດ້ານເສດຖະກິດ.

| **ວຽກງານການຜະລິດໝູນວຽນ** | **ວຽກງານການຜະລິດ** |
|---|---|
| ເປັນໜ້າວຽກທີ່ສະແດງເຖິງວຽກງານສ່ວນຕົວ (ວຽກງານຄົວເຮືອນ) | ເປັນໜ້າວຽກທີ່ສະແດງເຖິງວຽກງານສາທາລະນະ |
| ກິດຈະກຳເພື່ອຄວາມຢູ່ລອດແລະຄວາມເປັນຢູ່ຂອງປະຊາຊົນ (ວຽກງານການດູແລ, ເບິ່ງແຍງ ແລະ ວຽກຄົວເຮືອນ) | ກິດຈະກຳ ຜະລິດຜົນຜະລິດ ຫຼື ບໍລິການ ທີ່ມີມູນຄ່າ |
| ບໍ່ຮັບຮູ້ວ່າ ມີມູນຄ່າດ້ານເສດຖະກິດ (ບໍ່ມີຄ່າຈ້າງແຮງງານ) | ຮັບຮູ້ວ່າ ມີມູນຄ່າດ້ານເສດຖະກິດ (ມີຄ່າຈ້າງແຮງງານ) |
| ເປັນວຽກທີ່ບໍ່ສັງເກດເຫັນໄດ້ | ເປັນວຽກທີ່ສັງເກດເຫັນໄດ້ |

ສິ່ງທີ່ເປັນບັນຫາ ແມ່ນທັດສະນະ ກ່ຽວກັບກິດຈະກຳທາງດ້ານເສດຖະກິດ ຊຶ່ງກ່ຽວກັບກິດຈະກຳການເຮັດວຽກ ທີ່ພົວພັນເຖິງເງິນເດືອນ ໃນຂອບເຂດການຜະລິດ ກ່ຽວກັບວຽກງານການຜະລິດ ກິດຈະກຳຂອງຜູ້ຊາຍ. ດ້ວຍວິທີນີ້, ກິດຈະກຳພາຍໃນຄົວເຮືອນ ແລະ ການເບິ່ງແຍງ-ດູແລ, ທີ່ມີຄວາມຈຳເປັນສຳລັບກິດຈະກຳ ຂອງເພດຍິງສູງ, ແມ່ນຖືກຍົກເວັ້ນຈາກລາຍການຂອງວຽກງານ. ການແບ່ງແຮງງານທາງດ້ານສັງຄົມ ແລະ ເພດ ແຮງງານ ໄດ້ມີການສະທ້ອນ ແລະ ການໝູນວຽນບົດບາດຍິງ-ຊາຍ, ການພົວພັນ ແລະ ລຳດັບຊັ້ນ ປະກົດຂຶ້ນໃນສັງຄົມ. ການກຳນົດວຽກງານ ແລະ ກິດຈະກຳບາງຢ່າງ ທີ່ກ່ຽວຂ້ອງກັບແຕ່ລະເພດ ແລະ ໃຫ້ຄຸນຄ່າແຕກຕ່າງກັນ, ເຊິ່ງແປວ່າເປັນການແຈກຢາຍອຳນາດທີ່ບໍ່ເທົ່າທຽມກັນລະຫວ່າງເພດຍິງ ແລະ ເພດຊາຍ.

ການພິຈາລະນາມຸມມອງ ຂອງບົດບາດຍິງ-ຊາຍ ໄດ້ວິເຄາະຕະຫຼາດແຮງງານ ທີ່ຈະຊ່ວຍໃຫ້ພວກເຮົາ, ໃນດ້ານຫນຶ່ງ, ແມ່ນຢຸດຄວາມແຕກຕ່າງ ລະຫວ່າງວຽກງານການຜະລິດ ແລະ ວຽກງານການຜະລິດໝູນວຽນ. ດັ່ງນັ້ນ, ພວກເຮົາສາມາດເຂົ້າໃຈໄດ້ວ່າ ວຽກງານການຜະລິດ ແລະ ວຽກງານການຜະລິດໝູນວຽນ ເປັນສອງຊ່ວງເວລາ ຂອງຄວາມສຳພັນດຽວກັນ, ເປັນສອງອົງປະກອບໃນການໂຕ້ຕອບຄົງທີ່ ທີ່ບໍ່ສາມາດກຳຈັດ ແລະ ແຍກອອກຈາກກັນໄດ້. ໃນທາງກົງກັນຂ້າມ, ມັນຈະຊ່ວຍໃຫ້ພວກເຮົາເຂົ້າໃຈວ່າ ການຂະຫຍາຍຕົວ ຂອງແມ່ຍິງເຂົ້າໄປໃນຕະຫຼາດແຮງງານ - ນັ້ນແມ່ນ, ການມີສ່ວນຮ່ວມໃນການເຮັດວຽກທີ່ໄດ້ຮັບຄ່າຈ້າງ - ບໍ່ໄດ້ຖືກປະຖິ້ມໄວ້ໂດຍການປະຖິ້ມວຽກງານພາຍໃນຄົວເຮືອນ ຫຼື ການດູແລ-ເບິ່ງແຍງ. ໃນທາງກົງກັນຂ້າມ, ມັນຈະຊ່ວຍໃຫ້ພວກເຮົາເຂົ້າໃຈວ່າ ການຂະຫຍາຍຕົວ ຂອງແມ່ຍິງເຂົ້າໄປໃນຕະຫຼາດແຮງງານ - ນັ້ນແມ່ນ, ການມີສ່ວນຮ່ວມໃນການເຮັດວຽກທີ່ໄດ້ຮັບຄ່າຈ້າງ - ບໍ່ໄດ້ຖືກປະຖິ້ມໄວ້ໂດຍການປະຖິ້ມວຽກງານພາຍໃນຄົວເຮືອນ ຫຼື ການດູແລ-ເບິ່ງແຍງ.

University of Basel

ເຊັ່ນດຽວກັນ, ຈຶ່ງເວົ້າໄດ້ວ່າ ຕະຫຼາດແຮງງານບໍ່ແມ່ນຄວາມເປັນກາງ ແຕ່ເປັນບົດບາດ ຂອງເພດ, ຈະເຮັດໃຫ້ພວກເຮົາມີຄວາມເປັນໄປໄດ້ທີ່ຈະຄິດ ກ່ຽວກັບລັກສະນະສະເພາະ ຂອງແມ່ຍິງເຂົ້າໄປໃນຕະຫຼາດແຮງງານ. ດັ່ງທີ່ພວກເຮົາໄດ້ຮູ້ນຳກັນແລ້ວວ່າ, ການເຂົ້າຮ່ວມ ຂອງແມ່ຍິງໃນຕະຫຼາດແຮງງານ ແມ່ນມີເງື່ອນໄຂຢ່າງແຂງແຮງໂດຍສະເພາະແມ່ນບົດບາດຍິງ-ຊາຍ, ມາດຕະຖານ ແລະ ການພົວພັນທີ່ດຳເນີນຢູ່ໃນສັງຄົມ. ສະຫຼຸບໄດ້ວ່າ, ທັດສະນະຄວາມຄິດນີ້ຈະເປັນປະໂຫຍດໃນການວິເຄາະຊ່ອງຫວ່າງທີ່ແຕກຕ່າງກັນ ຂອງການເຮັດວຽກໃນລະດັບໂລກ, ເຊັ່ນ: ການຈັດແບ່ງອາຊີບຕາມແນວນອນ ແລະ ແນວຕັ້ງ ຫຼື ຊ່ອງຫວ່າງ ຂອງຄ່າຈ້າງ.

ພວກເຮົາມາຄິດນຳກັນ ກ່ຽວກັບສະຖານະການ ຫຼື ຕົວຢ່າງທີ່ສະທ້ອນເຖິງລັກສະນະທາງບົດບາດ ຂອງເພດໃນຕະຫຼາດແຮງງານ ແລະ ໃຫ້ພວກເຮົາຕັ້ງຄຳຖາມ ແລະ ມີຄວາມເຫັນ ກ່ຽວກັບບັນຫາດັ່ງກ່າວ!

**ແຫຼ່ງຂໍ້ມູນ**:


Huws Ursula (2012): The reproduction of difference: gender and the global division of labour. Work Organisation, Labour & Globalisation , Vol. 6, No. 1 (Spring 2012), pp. 1-10. https://www.jstor.org/stable/10.13169/workorgalaboglob.6.issue-1

International Labour Office (2014): Resource guide on Gender issues in employment and labour market policies. Working towards women's economic empowerment and gender equality. International Labour Organization, Geneva. https://www.ilo.org/employment/Whatwedo/Instructionmaterials/WCMS_243015/lang--en/index.htm